ພາສາລາວ



# 老挝语

ພາສາລາວ

第三册



张良民 编著

ພາສາລາວ

外语教学与研究出版社

责任编辑：张良民
责任校对：肖礼海

**老挝语**

LAOWO YU

**第三册**

**张良民 编著**

* * *

外语教学与研究出版社出版发行
(北京西三环北路 19 号 100089)
http://www.fltrp.com.cn
北京外国语大学印刷厂印刷
开本 850×1168 1/32 9.75 印张 124 千字
1989 年 3 月第 1 版 2003 年 1 月第 2 次印刷
印数：1301—1600 册

* * *

ISBN 7-5600-0524-1
G·253
定价：12.90 元

# ສາລະບານ


ບົດທີ ໑ ທຸງຊາດ ເຄື່ອງໝາຍແຫ່ງຊາດ ເພງຊາດ ນະຄອນຫຼວງຂອງປະເທດລາວ ---------- 1

ບົດທີ ໒ ສອງອ້າຍນ້ອງ ---------- 14

ບົດທີ ໓ ເສືອຄັນຄາກແລະລີງ ---------- 27

ບົດທີ ໔ ອ້າຍເອື້ອຍຄູຂອງພວກຂ້ອຍ ---------- 42

ບົດທີ ໕ ຈົດໝາຍຂອງທ່ານປະທານເໝົາ ເຖິງສະຫາຍສິງເຫຼົ ---------- 55

ບົດທີ ໖ ສີທອງຜູ້ພິລະອາດຫານ ---------- 70

ບົດທີ ໗ ດອກຈຳປາ ---------- 89

ບົດທີ ໘ ນາຍຕຸງກົວກັບໝາໃນ ---------- 104

ບົດທີ ໙ ຢາຕໍ່ອາຍຸ ---------- 123

ບົດທີ ໑໐ ໄວໜຸ່ມແລະສຸຂະພາບ ---------- 138

ບົດທີ ໑໑ ສິລະປະລາວສູງ ---------- 153

ບົດທີ ໑໒ ຊຽງຂວາງພິລະອາດຫານ ---------- 168

ບົດທີ ໑໓ ສອງໂລກໃນນະຄອນຫຼວງຄຳ ---------- 184

ບົດທີ ໑໔ ສຽງເພງລາວທີ່ໂຊເມ່ຍ ---------- 200

ບົດທີ ໑໕ ເອດິສັນນັກວິທະຍາສາດອາເມລິກາ ---------- 219

ບົດທີ ໑໖ ຊີວິດໄວໜຸ່ມຂອງກາກມາກ ---------- 239

# ບົດທີ ໑

# ທຸງຊາດ ເຄື່ອງໝາຍແຫ່ງຊາດ ເພງຊາດ

# ນະຄອນຫຼວງຂອງປະເທດ ລາວ

## ທຸງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ທຸງຊາດລາວມີວົງເດືອນສີຂາວຢູ່ທາງກາງ, ວົງເດືອນນັ້ນໝາຍເຖິງນ້ຳໃຈອັນແຈ້ງຂາວສະອາດບໍລິສຸດຕໍ່ປະເທດຊາດ. ພື້ນສີຄາມສະແດງວ່າຊາດລາວຮັກສັນຕິພາບ ສັນຕິສຸກແລະຮັກເອກະລາດຂອງຊາດ. ພື້ນສີແດງຢູ່ສອງຂ້າງນັ້ນ ສະແດງເຖິງເລືອດປະຕິວັດ ຊຶ່ງມີຄວາມໝາຍວ່າ ປະຊາຊົນລາວເດັດດ່ຽວຕໍ່ສູ້ສະຫຼະຊີວິດແລະເລືອດເນື້ອເພື່ອປົກປັກຮັກສາພື້ນຖານເອກະລາດຂອງຊາດ ແລະພື້ນຖານເອກະລາດນັ້ນມີແຕ່ເຮັດການປະຕິວັດເທົ່ານັ້ນ, ຈຶ່ງຈະສາມາດຍາດເອົາມາໄດ້.

ທຸງນີ້ເປັນທຸງປະຕິວັດທີ່ເຄີຍໃຊ້ຢູ່ໃນການຕໍ່ສູ້ກູ້ຊາດລາວ, ມັນມີຂະໜາດສ່ວນດັ່ງນີ້,

ລວງກວ້າງຂອງທຸງເທົ່າກັບ ໒/໓ ຂອງລວງຍາວ,

, ແຂບແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງແຂບສີຄາມ ,

ສາຍຜ່າກາງຂອງວົງເດືອນສີຂາວເທົ່າກັບ ໔/໕ ຂອງແຂບສີຄາມ .

### ສັບໃໝ່

ທຸງຊາດ ນ. 国旗

ວົງ ນ. 圆圈

ໝາຍເຖິງ ມ. 意味着

ບໍລິສຸດ ວ. 纯洁

ພື້ນ ນ. 底

ສີຄາມ ນ. 蓝色

ສັນຕິສຸກ ວ. 安宁、康宁

ຂະໜາດສ່ວນ ນ. 比例，规格

ລວງກວ້າງ ນ. 宽度

ລວງຍາວ ນ. 长度

ແອບ ນ. 边、边缘

## ເຄື່ອງໝາຍແຫ່ງຊາດ

ກົງຈັກ ໝາຍເຖິງອຸດສາຫະກຳ; ຮວງເຂົ້າແລະທົ່ງນາໝາຍເຖິງກະສິກຳ; ປ່າໄມ້, ບໍ່ແຮ່, ພະລັງໄຟຟ້າ ໝາຍເຖິງຄວາມອຸດົມສົມບູນຂອງປະເທດຊາດ.

ດາວຄຳ ໝາຍເຖິງອະນາຄົດອັນຈະເລີນຮຸ່ງເຮືອງເຂັ້ມແຂງທີ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດ ລາວຈະກ້າວຂຶ້ນສູ່ສັງຄົມນິຍົມ ຊຶ່ງເປັນຈຸດໝາຍປາຍທາງທີ່ຄົນລາວທຸກຄົນຈະຕ້ອງບືນຕົວຂຶ້ນເພື່ອໃຫ້ປະກົດເປັນຈິງ.

ຄ້ອນຕີໝາຍເຖິງຊົນຊັ້ນກຳມະກອນ;ກ່ຽວໝາຍເຖິງຊົນຊັ້ນຊາວໄຮ່ນາຜູ້ອອກແຮງງານ ຊຶ່ງເປັນສ່ວນຫຼວງຫຼາຍຂອງພົນລະເມືອງລາວ.ຄ້ອນຕີກັບ ກ່ຽວໄຂວ່ກັນ ໝາຍເຖິງພັນທະພາບກຳມະກອນ-ຊາວນາທີ່ຢູ່ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ແລະເປັນພື້ນຖານໃຫ້ແກ່ຄວາມສາມັກຄີບັນດາຊົນຊາດ ຊົນເຜົ່າ ແລະຊົນຄົນຕໍ່ສູ້ເພື່ອປົກປັກຮັກສາແລະສ້າງສາປະເທດຊາດ.



此为试读，需要完整PDF请访问：www.ertongbook.com

ເຄື່ອງ ໝາຍຂອງ ສ, ປ, ປ, ລາວ ເປັນຮູບວົງມົນ, ດ້ານລຸ່ມມີຮູບເຄິ່ງ ກົງຈັກເປັນແຂ້ວ ແລະໂບສີແດງ ຊຽນ ອັກສອນ ສ, ປ, ປ, ລາວສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນ ຮູບເຟື້ອງພະຈັນແລະໂບສີແດງຊຽນອັກສອນສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ. ລະຫ່ວາງກາງຂອງສອງປາຍຮວງເຂົ້າມີຮູບທາດຫຼວງ, ຢູ່ກາງຮູບວົງມົນມີທົນທາງ ທົ່ງນາ ປ່າໄມ້ ແລະ ເຂື່ອນໄຟຟ້ານ້ຳຕົກ.

## ສັບໃໝ່

ເຄື່ອງໝາຍແຫ່ງຊາດ ນ. 国徽

ກົງຈັກ ນ. 机轮，齿轮

ຮວງເຂົ້າ ນ. 稻穗、谷穗

ບໍ່ແຮ່ ນ. 矿藏

ພະລັງໄຟຟ້າ ນ. 电力

ດາວຄຳ ນ. 金星

ໂບ (bow) 丝带，缎带

ບຶນຕົວ ກ. 奋力，力争

ຄ້ອນຕີ ນ. 锤子

ໄຂ່ວ ກ. 交叉，交错

ພັນທະພາບ ນ. 联盟

ວາລະ ນ. 日期、次、议程

ປະຖົມມະລຶກ 首届，首次

## ເພງຊາດລາວ

ຊາດລາວຕັ້ງແຕ່ໃດມາ ລາວທຸກຖ້ວນໜ້າເຊີດຊູສຸດໃຈ
ຮ່ວມແຮງຮ່ວມຈິດຮ່ວມໃຈ ສາມັກຄີກັນ ເປັນກຳລັງດຽວ
ເດັດດ່ຽວພ້ອມກ້າວໜ້າ ບູຊາຊູກຽດຂອງລາວ ສົ່ງເສີມໃຊ້ສິດເປັນເຈົ້າລາວທຸກ
ຊົນເຜົ່າສະເໝີພາບກັນ ບໍ່ໃຫ້ຝູງຈັກກະພັດແລະພວກຂາຍຊາດເຂົ້າມາລົບກວນ

ລາວທັງມວນ ຊູເອກະລາດ ອິດສະລະພາບຂອງຊາດລາວໄວ້ ຕັດສິນໃຈ ສູ້ຊີງເອົາໄຊ ພາຊາດກ້າວໄປສູ່ຄວາມວັດທະນາ.

ຜູ້ແຕ່ງທຳນອງ: ທອງດີ

ຜູ້ແຕ່ງເນື້ອໃນ: ທ່ານສີຈະນະ ສີສານ

## ສັບໃໝ່

ຕັ້ງແຕ່ໃດມາ 从来

ຖ້ວນໜ້າ ນ. 整体

ເຊີດຊູ ກ. 推崇，推举，崇尚

ບູຊາ ກ. 崇拜，推崇

ຊູ ກ. 举，擎

ຊົນເຜົ່າ ນ. 部族、民族、部落

ສະເໝີພາບ ນ. 平等

ທັງມວນ ນ. 全体

ຊິງ ກ. 争夺

## ເມືອງຫຼວງວຽງຈັນ

ເມືອງວຽງຈັນເປັນນະຄອນຫຼວງຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ. ເມືອງວຽງຈັນເປັນເມືອງໃຫຍ່ກວ່າໝູ່ໃນປະເທດລາວ, ເມືອງນີ້ຕັ້ງຢູ່ຮິມຝັ່ງຊ້າຍຂອງຄົດແມ່ນ້ຳຂອງແຫ່ງໜຶ່ງຢູ່ພາກກາງຂອງປະເທດລາວ, ເມືອງວຽງຈັນເປັນເມືອງເກົ່າແກ່ ມີປະຫວັດສາດສືບມາແຕ່ຄັ້ງ ບູຮານຫຼາຍສະຕະວັດ. ເມືອງວຽງຈັນມີຄວາມໝາຍຄືເມືອງໄມ້ຈັນ, ຕາມເລົ່າລືວ່າ ແຕ່ກ່ອນ ຢູ່ເມືອງວຽງຈັນມີໄມ້ຈັນຫຼາຍທີ່ສຸດ ແຕ່ວ່າຍ້ອນຖືກພວກຕ່າງດ້າວປົກຄອງ, ໄມ້ຈັນຈຶ່ງຖືກປ້ຳ ຈົນເກືອບໝົດແລ້ວ.

ສັບໃໝ່

| | | | |
|---|---|---|---|
| ຮິມ | ນ. 边 | ໄມ້ຈັນ | ນ. 檀香木 |
| ຝັ່ງ | ນ. 岸 | ເລົ່າລື | ກ. 传说 |
| ຄົດ | ວ. 弯曲 | ພວກຕ່າງດ້າວ | ນ. 外国人，外籍人 |
| ເທື່ອ | ນ. 次，回 | ປ້ຳ | ກ. 砍伐 |

## ເມືອງວຽງໄຊ ສັນຍາລັກແຫ່ງການຕໍ່ສູ້ປົດປ່ອຍຊາດລາວ

ເມືອງວຽງໄຊມີຄວາມໝາຍວ່າເມືອງທີ່ມີໄຊຊະນະ. ເມືອງວຽງໄຊແມ່ນດິນດອນຕອນໜຶ່ງທີ່ອ້ອມຈອດໄປດ້ວຍພູຜາປ່າໄມ້ອັນສວຍງາມ, ຕັ້ງຢູ່ຫ່າງຈາກຕົວເມືອງຊຳເໜືອໄປທາງຕາເວັນອອກສ່ຽງໃຕ້ປະມານ 60 ກິໂລແມັດ, ຊື່ເກົ່າຂອງເມືອງວຽງໄຊເອີ້ນວ່ານາໄກ. ບ້ານນາໄກເປັນຊື່ທີ່ປະຊາຊົນແຂວງຫົວພັນເຄີຍເອີ້ນກັນມາແຕ່ເດີມ. ດິນແດນແຫ່ງນີ້, ບັນຈຸໄປດ້ວຍນັກຕໍ່ສູ້ກູ້ຊາດຜູ້ພິລະອາດ ຫານຂອງປະຊາຊົນບັນດາຊົນຊາດເຮົາແລະກໍ່ເປັນສັນຍາລັກແຫ່ງການຕໍ່ສູ້ມີຢູ່ໃນປະ ຫວັດສາດຂອງຊາດພວກເຮົາ.

ກ່ອນໜ້ານີ້ ຫຼາຍສິບປີ ນາໄກກໍ່ໄດ້ປະກອບສ່ວນຢ່າງສົມກຽດເຂົ້າໃນ ພາລະກິດຕໍ່ສູ້ເພື່ອຍາດແຍ່ງເອົາເອກະລາດແລະອິດສະລະພາບມາໃຫ້ຊາດ, ດິນດອນທົ່ງຫຍ້າຜາຫີນແລະປ່າໄມ້ແຫ່ງນີ້ໄດ້ເປັນບ່ອນກຳບັງຊ່ອນກູ້ເອົາຊີວິດຂອງນັກກູ້ຊາດບໍ່ຈັກວ່າເທົ່າໃດເທື່ອ, ຕົກມາໃນສະໄໝທີ່ປະຊາຊົນລາວປະເຊີນໜ້າກັບສົງຄາມທຳລາຍທາງອາກາດຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດຂອງຈັກກະພັດອາເມລິກາແລະ ພວກ

ລູກມືນັ້ນ, ດິນແດນແຕ່ລະຂໍ້ມືຂອງເມືອງວຽງໄຊກໍ່ໄດ້ກາຍເປັນສັນຍາລັກແຫ່ງຈິດໃຈກ້າສູ້ກ້າຕີກ້າເອົາໄຊຊະນະຢ່າງບໍ່ຫວັ່ນໄຫວຄອນແຄນໄດ້ຂອງທະຫານແລະປະຊາຊົນເຮົາ.

ເມືອງວຽງໄຊຍັງແມ່ນສູນກາງທາງການເມືອງ . ເສດຖະກິດແລະວັດທະນະທຳຂອງເຂດປົດປ່ອຍອີກ. ດອ້ອມໃນບ່ອນນັ້ນມີເຮືອນບ້ານສະຖານທີ່ ໂຮງໝໍໂຮງຮຽນ ໂຮງຈັກໂຮງງານ ໂຮງແຮມຮັບແຂກຮ້ານຄ້າ ໂຮງສະແດງສິນລະປະ ໂຮງສາຍຮູບເງົາ ສະໜາມກິລາແລະຖະໜົນຫົນທາງຕ່າງໆ.

ເມືອງວຽງໄຊທີ່ພິລະອາດຫານ ເມືອງວຽງໄຊທີ່ສວຍງາມ ເມືອງວຽງໄຊທີ່ເປັນສັນຍາລັກແຫ່ງການຕໍ່ສູ້ປົດປ່ອຍຊາດຂອງຊົນຊາດລາວຈົ່ງກ້າວໄປສູ່ຄວາມ ຮຸ່ງເຮືອງສີວິໄລທີ່ພວມລໍຖ້າຢູ່ເບື້ອງໜ້າເທີ້ນ!

## ສັບໃໝ່

ວຽງໄຊ ນ. 万赛

ດິນດອນ ນ. 土地

ອ້ອມ ກ. 围绕

ຈອດ ກ. 停, 止

ຫ່າງຈາກ ກ. 距离

ນາໄກ 纳盖 (地名)

ຂໍ້ມື ນ. 手指节, 指节

ຫວັ່ນໄຫວຄອນແຄນ ກ. 动摇, 摇晃

ບັນຈຸ ກ. 容纳, 装, 载

ສົມກຽດ ວ. 光荣的

ທົ່ງຫຍ້າ ນ. 草原

ກຳບັງ ກ. 遮掩、掩护、遮拦

ປະເຊີນໜ້າ ກ. 面对, 面临

ລູກມື ນ. 走狗, 打手

ໂຮງແຮມຮັບແຂກ ນ. 宾馆

ສີວິໄລ ວ. 文明, 发达

ສູນກາງ ນ. 中央

ໂຮງແຮມ ນ. 旅馆, 饭店    ເຫ້ນ ໑. 吧

## ຂໍ້ສັງເກດໃນບົດຮຽນ

໑. ວົງເດືອນ

ນ. ໝາຍເຖິງດວງຈັນ, ພະຈັນ, ຄວາມກົມແຫ່ງດວງຈັນ. ວົງເປັນຮູບທີ່ຂຽນເປັນເສັ້ນລ້ອມຮອບບ່ອນໜຶ່ງ. 圆、圆圈

- ວົງເລັບ ນ. ເຄື່ອງໝາຍຮູບດັ່ງນີ້(    ), ກໍເອີ້ນວ່າວົງເລັບນ້ອຍ, ນອກນັ້ນຍັງມີວົງເລັບກາງ, ວົງເລັບໃຫຍ່.
- ວົງວຽນ ນ. ເຄື່ອງມືສຳລັບຂຽນວົງມົນ ມີ ໒ ຂາ, ຂາໜຶ່ງໃສ່ສໍ, ອີກຂາໜຶ່ງມີເຫຼັກປາຍແຫຼມ
- ລຳວົງ ກ. ການຟ້ອນ ຕ້ອນກັນລະຫວ່າງຊາຍຍິງ, ມີການຮ້ອງເພງ ຕີກອງແລະຕົບມືປະກອບດ້ວຍ, ເປັນການຟ້ອນລຳທີ່ມີລັກສະນະຊົນຊາດລາວ: 南旺舞, 意为圆圈舞
- ວົງການ ນ. ໝູ່ທຸລະກິດໃດທຸລະກິດໜຶ່ງ ຕົວຢ່າງ: ວົງການສິນລະປະ, ວົງການກິລາ, ວົງການທູດ, ວົງການຄ້າ, ບຸກຄົນທຸກວົງການ

໒. ສີຄາມ

ພື້ນສີຄາມສະແດງວ່າຊາດຮັກສັນຕິພາບ. ສັນຕິສຸກແລະຮັກເອກະລາດ ຂອງຊາດ, "ສີຄາມ" ໃນທີ່ນີ້ ໝາຍເຖິງສີຟ້າ.

ຕົວຢ່າງ, ທ້ອງຟ້າສີຄາມ. ນອກຈາກສີຄາມ、 ສີແດງນັ້ນ,ຍັງມີສີອື່ນ

ອີກ ຕົວຢ່າງຄື ສີຂຽວ, ສີສົ້ວ, ສີແສດ, ສີເດ, ສີຂີ້ເຖົ່າ, ສີກາເຟ ເປັນຕົ້ນ.

໓. ພື້ນ

ນ. ຊັ້ນ, ບ່ອນຮາບ, ໜ້າພຽງທາງລຸ່ມພື້ນດິນ, ໜ້າດິນ, ແຜ່ນດິນ.

- ເຮືອນຂອງຄົນລາວ ແມ່ນເຮືອນຍົກພື້ນ, ແລະພື້ນເຮືອນຂອງລາວ ສ່ວນຫຼາຍແມ່ນເຮັດດ້ວຍແປ້ນຫຼືຟາກ.
- ພື້ນເມືອງ ນ. ເອີ້ນຄົນຫຼືສິ່ງຂອງທີ່ຢູ່ປະຈຳເມືອງນັ້ນ, ຕົວຢ່າງ, ຊາວພື້ນເມືອງ, ຄົນພື້ນເມືອງ, ເພງພື້ນເມືອງ, ນິທານພື້ນເມືອງ, ຢາພື້ນເມືອງເປັນຕົ້ນ.

໔. ກົງຈັກ,

ນ. ວົງຈັກ, ວົງຈັກທີ່ເປັນຮູບມົນໆ, ຜູ້ເຊື່ອຖືສາສະໜາພຸດປຽບເອົາກົງຈັກເປັນຄວາມຊົ່ວ, ສຸພາສິດລາວວ່າ "ຢ່າເຫັນກົງຈັກເປັນດອກບົວ" ມີຄວາມໝາຍວ່າຢ່າເຫັນຄວາມຊົ່ວເປັນຄວາມດີ; ດອກບົວ ອຸປະມາ ວ່າ ຄວາມດີ.

ກົງຍັງມີຄວາມໝາຍວ່າ ໄມ້ຫຼືໂລຫະຮູບມົນໂຄ້ງທີ່ເຮັດເປັນລໍ້ລົດ ຫຼື ລໍ້ກວຽນ ເອີ້ນວ່າກົງລົດ, ຕົວຢ່າງ: ລົດສາມກົງກໍ່ແມ່ນລົດສາມລໍ້, ກົງກວຽນ, ກົງລໍ້......

໕. ເຄື່ອງ



此为试读，需要完整PDF请访问： www.ertongbook.com

ນ. ສິ່ງຂອງ, ເຂົ້າຂອງຕ່າງໆ

— ເຄື່ອງກິນ, ເຄື່ອງຄົວ, ເຄື່ອງນຸ່ງ, ເຄື່ອງນອນ, ເຄື່ອງເດີນທາງ, ເຄື່ອງຫຼິ້ນ, ເຄື່ອງມື, ເຄື່ອງໃຊ້ໄມ້ສອຍ, ເຄື່ອງເຮືອນ, ເຄື່ອງຂຽນ, ເຄື່ອງຮຽນ, ເຄື່ອງເສບ, ເຄື່ອງດີດສີຕີເປົ່າ.

ເຄື່ອງໃນຫມາຍເຖິງອະວະຍະວະພາຍໃນຂອງສັດເປັນຕົ້ນວ່າຕັບ, ໄຕ, ໄສ້. ປອດ. ເຄື່ອງເງິນເຄື່ອງຄຳ, ເຄື່ອງສົ້ມຂອງຫວານ.

ນ. ເຄື່ອງຈັກ.

— ເຄື່ອງຈັກຫຍິບ, ເຄື່ອງກຳເນີດໄຟຟ້າ, ເຄື່ອງພິມ, ເຄື່ອງສູບນ້ຳ ເຄື່ອງປັບອາກາດ, ເຄື່ອງຊັກຜ້າ, ເຄື່ອງຂະຫຍາຍສຽງ, ເຄື່ອງວິທະຍຸ, ເຄື່ອງອັດສຽງ.

ຝ. ອຸດສາຫະກຳ, ອຸດສາຫະກຳເບົາ, ອຸດສາຫະກຳໜັກ.

ກະສິກຳ = ກະເສດຕະກຳ; ກົດທະກຳ.

ບົດສອນຝຶກ ຫັດ

ແປຈີນເປັນລາວ:

1. 热爱和平
2. 维护独立和自由
3. 纯洁的心灵
4. 救国斗争
5. 夺取胜利
6. 工农联盟
7. 最终目标
8. 繁荣昌盛的未来

ແປລາວເປັນຈີນ:

໑. ກ້າວໄປສູ່ສັງຄົມ ນິ ຍົມ

໒. ເດັດດ່ຽວຕໍ່ສູ້ສະຫຼະຊີວິດແລະເລືອດເນື້ອ

໓. ລາວທຸກຊົນເຜົ່າສະເໝີພາບກັນ

໔. ຮ່ວມແຮງຮ່ວມຈິດຮ່ວມໃຈສາມັກຄີກັນເປັນກຳລັງກຽວ.

໕. ພວກຕ່າງດ້າວທ້າວຕ່າງແດນ

໖. ກ້າວໄປສູ່ຄວາມວັດທະນາ

໗. ສົ່ງເສີມໃຊ້ສິດເປັນເຈົ້າ

໘. ສະພາປະຊາຊົນສູງສຸດ

໙. ມີປະຫວັດສາດສືບມາແຕ່ບູຮານຫຼາຍສະຕະວັດ

໑໐. ບໍ່ໃຫ້ຝູງຈັກກະພັດແລະພວກຂາຍຊາດເຂົ້າມາລົບກວນ.

ຕອບຄຳຖາມ:

໑. ທຸງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວເປັນແນວ ໃດ ແລະ ມີຄວາມໝາຍຫຍັງແດ່?

໒. ທຸງຊາດມັນມີຂະໜາດສ່ວນແນວໃດ?

໓. ເຄື່ອງໝາຍແຫ່ງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຢ່າງໃດ, ແລະມີຄວາມໝາຍຫຍັງແດ່?

໔. ເລົ່າສະພາບເມືອງຫຼວງວຽງຈັນໂດຍຫຍໍ້ ໆ.

໕. ເລົ່າສະພາບເມືອງວຽງໄຊໂດຍຫຍໍ້ ໆ.

໖. ຊີ້ແຈ້ງເອົາທຸງຊາດ, ເຄື່ອງໝາຍແຫ່ງຊາດ, ເພງຊາດ, ນະ

ຄອນຫຼວງຂອງປະເທດຈີນໂດຍຫຍໍ້ ໆ ເບິ່ງດູ!

ແປຕອນລຸ່ມນີ້ເປັນພາສາຈີນ:

ພື້ນທຸງສ່ວນກາງເປັນແຜ່ນຜ້າສີຟ້າຍາວໄປຕາມທາງນອນ, ມີແຜ່ນຜ້າແດງເປັນແຂບສອງຂອກ, ທຸງນີ້ຍາວກວ່າສ່ວນກວ້າງໜຶ່ງສ່ວນສາມ. ພື້ນສີຟ້ານີ້ ໝາຍເຖິງຜືນແຜ່ນດິນລາວທີ່ອຸດົມສົມບູນດ້ວຍພັນທັນຍາຫານ ແລະຮຸກຂະຊາດນານາຊະນິດຂຽວຢູ່ທຸກລະດູການຫຼືໝາຍເຖິງພື້ນຟ້າອັນເປັນທີ່ອາໄສຂອງໝູ່ດາວ ມີບພະເຕາະອັນມີພະຈັນເປັນປະມຸກ ເປັນຂອງສູງຄວນເຄົາລົບນັບຖື.

ຢູ່ກາງແຜ່ນສີຟ້ານັ້ນ ແມ່ນຮູບພະຈັນເພັງສີຂາວນີນ, ພະຈັນ ເປັນປະມຸກຂອງໝູ່ດາວ ແລະມັນໝາຍເຖິງຄວາມບໍລິສຸດໃສຂອງຄົນລາວ ທີ່ມີຄວາມມັກສະຫງົບ ມັກສັນຕິ ແລະພະຈັນໝາຍເຖິງອົງກະສັດຂອງລາວ, ປະເທດລາວທີ່ຮຽກວ່າປະເທດລ້ານຊ້າງມາແຕ່ບູຮານ ແລະພຸດທະສາສະໜາປະຈໍາຊາດລາວດ້ວຍ.

ສອງຂອກແຜ່ນສີຟ້າອັນມີພະຈັນເພັງຢູ່ກາງນັ້ນ, ເປັນແຜ່ນຜ້າສີແດງຂະໜາດກວ້າງທີ່ເຄິ່ງຂອງແຜ່ນສີຟ້າ, ສີແດງທັງສອງຂ້າງນີ້ ໝາຍ ເຖິງເລືອດຂອງປະຊາຊົນລາວ ທີ່ຈະຍອມເສຍສະຫຼະ ເພື່ອຮັກສາຜືນແຜ່ນດິນອັນຂຽວງາມດູດດື່ມພົນຟ້ານັ້ນໄວ້.

ນີ້ແມ່ນລັກສະນະແລະຄວາມໝາຍຂອງທຸງຊາດລາວ ທີ່ໄດ້ບັນຍັດໄວ້ໃນສະໄໝລັດຖະບານລາວອິດສະລະ ຕາມຄວາມເຫັນຊອບຂອງລັດຖະບານແລະສະພາຜູ້ແທນຣາດສະດອນ ປີຄ.ສ ໑໙໔໕ ແລະທຸງນີ້ ຮຽກວ່າ "ທຸງພະຈັນເພັງ".

## ບົດອ່ານປະກອບ

### ປ ະ ເ ທ ດ ລ າ ວ

ປະເທດລາວແມ່ນປະເທດໜຶ່ງໃນສາມປະເທດທີ່ຢູ່ແຫຼມອິນດູຈີນ, ທິດເໜືອຕິດກັບພົມແດນຈີນ, ທິດໃຕ້ຕິດກັບພົມແດນປະເທດຂະເໝນ, ທິດຕາເວັນອອກຕິດກັບປະເທດຫວຽດນາມ, ທິດຕາເວັນຕົກຕິດກັບປະເທດໄທແລະປະເທດພະມ້າ.

ດິນແດນຂອງປະເທດລາວ ແທກໄດ້ປະມານສອງແສນສາມໝື່ນກວ່າຕາຕະລາງກິໂລແມັດ, ມີແມ່ນ້ຳລຳເຊງາມຕາ, ມີທົ່ງພຽງກວ້າງໃຫຍ່ໄພສານ, ພາກເໜືອມີພູຫຼາຍກວ່າພາກໃຕ້, ພາກກາງແລະພາກໃຕ້ ມີທົ່ງນາຫຼາຍ ກວ່າພາກເໜືອ, ອາກາດບໍ່ຮ້ອນແລະບໍ່ໜາວຈົນເກີນໄປ. ທຳມະຊາດງາມຕາແທ້. ຕາມທົ່ງພຽງ ມີທົ່ງນາກວ້າງຂວາງ ແລະອຸດົມສົມບູນ, ເປັນອູ່ເຂົ້າອູ່ປາ.

ປະເທດລາວ ເປັນພາກພື້ນອຸດົມສົມບູນ, ມີຊັບໃນດິນສິນໃນນ້ຳຫຼາຍ. ຊັບພະຍາກອນເຫຼົ່ານີ້ ພຽງພໍແກ່ການສ້າງສາປະເທດໃຫ້ຮຸ່ງເຮືອງໄດ້. ມີແມ່ນ້ຳຂອງໃຫຍ່ຍາວໄຫຼຜ່ານແຕ່ເໜືອຮອດໃຕ້ແລະໄຫຼຜ່ານທົ່ງນາອັນກວ້າງສຸດສາຍຕາ.

ແມ່ນ້ຳຂອງໄດ້ນຳເອົາຄວາມອຸດົມສົມບູນມາສູ່ຊາວລາວເຮົາ, ຮອດຍາມເຂົ້ານາສຸກເຫຼືອງ, ແຄມເບື້ອງສອງຟາກແມ່ນ້ຳຂອງເຫັນເປັນຕາອອນຊອນ.

ສ່ວນພູຜາປ່າດົງມີໄມ້ຕ່າງໆຫຼາຍຊະນິດ ເຊັ່ນໄມ້ສັກ, ໄມ້ຍູງ, ໄມ້ຍາງ, ໄມ້ດູ່, ບາງບ່ອນມີໄມ້ແປກ, ໄມ້ໄຜ່, ແລະມີສັດປ່າ ເຊັ່ນຊ້າງ, ເສືອ, ຟານແລະອື່ນໆ.

ໃນດິນມີແຮ່ທາດຕ່າງໆເຊັ່ນ: ບໍ່ເງິນ, ບໍ່ຄຳ, ບໍ່ກົ່ວ ແລະອື່ນໆ. ແມ່

ນ້ຳລຳເຊຫນອງບຶງມີປູປານານາຊະນິດ. ຢູ່ຕາມທົ່ງພຽງເພິ່ນລ້ຽງສັດງົວ, ຄວາຍ, ຊ້າງ, ມ້າ, ຕາມຫມູ່ບ້ານມີສັດລ້ຽງ ເຊັ່ນ, ເປັດ, ໄກ່, ຫມູ.

ຊັບສິນທີ່ມີໃນປະເທດລາວສາມາດອຳນວຍແກ່ການສ້າງສາບ້ານເມືອງ ໃຫ້ເປັນປະເທດສວຍງາມຮັ່ງມີ.

## ບົດທີ ໔

## ສອງອ້າຍນ້ອງ

ທ້າວສີກັບທ້າວສອນກັບຈາກໂຮງຮຽນຕອນແລງ, ສອງອ້າຍນ້ອງຍ່າງ ລັດທົ່ງນາ ເພື່ອຈະຄືນສູ່ເຮືອນຂອງຕົນ. ເມື່ອອອກຂົວຂ້າມນ້ຳ, ຜູ້ເປັນອ້າຍຈຶ່ງເວົ້າຂຶ້ນ:

"ນ້ອງ! ລົງສວນຕົດຜັກກ່ອນເປັນໃດ?"

"ດູກັບມີ, ບົວກັບມີ, ຈິເອົາຫຍັງມາຕົດ?"

"ມີມີດ, ປ້າຈອຍກຳລັງຕົດກຸ່ມຫຍ້າຢູ່ພຸ້ນ."

ທ້າວສອນແລ່ນໄປຫາເປົ່າຫມາຍແລະກ່າວຍາງອອກເຫັນງານນຳຫາງ. ບໍ່ພໍດາວ, ສວນຜັກທີ່ກຳລັງຂຽວງາມຢູ່ແລ້ວ ກໍ່ມີສອງຫນຸ່ມນ້ອຍ ບົວລະບັດຮັກສາ. ດິນຖືກຈົ້ມແລະບົ່ງຂຶ້ນ, ຫຍ້າຖືກຫຼົກຖອນ ແລະສຸດທ້າຍນ້ຳກໍ່ໄດ້ຫົດອາບທົ່ວໃບ ແລະລຳຕົ້ນໃຫ້ຊຸ່ມຊື່ນຂຶ້ນມາ. ເມື່ອວຽກງານຮຽບຮ້ອຍແລ້ວ, ເຂົາເຈົ້າພາກັນນັ່ງ ພັກຜ່ອນ ແລະຫຼຽວເບິ່ງສວນຜັກດ້ວຍຄວາມດີໃຈ.

"ພວກຫຼານຕົດແລ້ວຫວະ? ຟ້າວເຣັດ, ຟ້າວແລ້ວ, ຟ້າວເມືອ... ແມ່ມາແລ້ວບໍ່ຈົກທັນນ່າ" ປ້າຈອຍຢູ່ຂ້າງສວນຮ້ອງມາໃສ່.

"ແລ້ວ ໆ ແດປ້າ, ຂອບໃຈຫຼາຍ ໆ ເດີ" ທ້າວສີທັງເວົ້າທັງ ເອົາຄຸ ແລະບົວໄປສົ່ງໃຫ້ປ້າຈອຍ.

ທັງສອງອ້າຍນ້ອງກັບມາຮອດເຮືອນ, ແຕ່ບໍ່ປາກົດເຫັນແມ່.



此为试读，需要完整PDF请访问：www.ertongbook.com